# ບົດຖະແຫຼງຂ່າວ

# ຂອງຄະນະສະເພາະກິດ ເພື່ອປ້ອງກັນ ຄວບຄຸມ ແລະ ແກ້ໄຂ ພະຍາດອັກເສບປອດທີ່ເກີດຈາກເຊື້ອຈຸລະໂລກສາຍພັນໃໝ່ COVID-19

## ປະຈຳວັນພຸດ ວັນທີ 31 ມີນາ ປີ 2021

ໂດຍ: ທ່ານ ດຣ. ລັດສະໝີ ວົງຄຳຊາວ ຮອງຫົວໜ້າກົມຄວບຄຸມພະຍາດຕິດຕໍ່, ກະຊວງສາທາລະນະສຸກ, ຕາງໜ້າໃຫ້ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂໍອະນຸຍາດລາຍງານ:

## I. ສະພາບການລະບາດຂອງພະຍາດ COVID-19 ຢູ່ ສປປ ລາວ ແລະ ໃນໂລກ

- ປະຈຸບັນ ທົ່ວໂລກມີການລາຍງານການລະບາດຂອງພະຍາດ COVID-19 ທັງໝົດ 219 (ປະເທດ/ເຂດ), ຜູ້ຕິດເຊື້ອສະສົມ 128,770,286 ຄົນ, ເສຍຊີວິດສະສົມ 2,814,755 ຄົນ ແລະ ປິ່ນປົວຫາຍດີ 103,898,775 ຄົນ;
- ອາເມຣິກາ ແມ່ນອັນດັບໜຶ່ງ ມີການລາຍງານຈຳນວນຜູ້ຕິດເຊື້ອສະສົມສູງເຖິງ 31,094,274 ຄົນ ແລະ ເສຍຊີວິດສະສົມ 564,116 ຄົນ;
- ອັນດັບສອງ ແມ່ນປະເທດ ບຣາຊິວ ມີຜູ້ຕິດເຊື້ອສະສົມ 12,664,058 ຄົນ, ເສຍຊີວິດສະສົມ 317,936 ຄົນ;

- **ສຳລັບບັນດາກຸ່ມປະເທດອາຊຽນ**, ປະເທດ **ອິນໂດເນເຊຍ (ອັນດັບທີ 20 ຂອງໂລກ)** ແມ່ນມີຜູ້ຕິດເຊື້ອສະສົມ ສູງກວ່າໝູ່ , ຖັດລົງມາແມ່ນປະເທດ **ຟີລິບປິນ, ມາເລເຊຍ, ມຽນມ້າ** ຕາມລຳດັບ;

## II. ການເຝົ້າລະວັງ COVID-19 ຢູ່ ສປປ ລາວ

- **ວັນທີ 30 ມີນາ ທົ່ວປະເທດມີຜູ້ເດີນທາງເຂົ້າມາ ມີທັງໝົດ 3,244 ຄົນ:**
  - ໃນນັ້ນຈຸດຜ່ານດ່ານ **ລາວ - ໄທ** ທັງໝົດ **2,054** ຄົນ;
  - ຈຸດຜ່ານດ່ານ **ລາວ - ຈີນ** ທັງໝົດ **82** ຄົນ;
  - ຈຸດຜ່ານດ່ານ **ລາວ - ຫວຽດນາມ** ທັງໝົດ **1,062** ຄົນ ;
  - ຈຸດຜ່ານດ່ານ **ສະໜາມບິນສາກົນວັດໄຕ** ທັງໝົດ **46** ຄົນ;
- ທຸກຄົນທີ່ເຂົ້າມາທາງຈຸດຜ່ານແດນ ໃນມື້ວານນີ້ ແມ່ນ
  - ໄດ້ຜ່ານການວັດແທກອຸນຫະພູມຮ່າງກາຍ, ແຕ່ບໍ່ພົບຜູ້ມີອາການເປັນໄຂ້
  - ໄດ້ເກັບຕົວຢ່າງທຸກໆຄົນມາກວດ ເຊິ່ງທັງໝົດແມ່ນບໍ່ພົບຜູ້ຕິດເຊື້ອ COVID-19;

1. **ການຕິດຕາມຜູ້ຖືກຈຳກັດບໍລິເວນ ຢູ່ໃນສະຖານທີ່ ທີ່ກຳນົດໄວ້ ໃນຂອບເຂດທົ່ວປະເທດ**

- ປະຈຸບັນ ທົ່ວປະເທດ ມີສູນຈຳກັດບໍລິເວນທີ່ຍັງເປີດນຳໃຊ້ຢູ່ ທັງໝົດ **34** ສູນ, ມີຜູ້ຖືກຈຳກັດບໍລິເວນຢູ່ສູນ **3,209** ຄົນ, ໄດ້ເກັບຕົວຢ່າງມາກວດວິເຄາະ ທັງໝົດ ແລະ ບໍ່ພົບຜູ້ຕິດເຊື້ອ COVID-19.

2. **ການເກັບຕົວຢ່າງມາກວດວິເຄາະ ແລະ ຄົ້ນຫາຜູ້ຕິດເຊື້ອພະຍາດ**

- ໃນວັນທີ 30 ມິຖຸນາ 2021 ໄດ້ເກັບຕົວຢ່າງມາກວດວິເຄາະທັງໝົດ **484** ຄົນ;

- ຜົນກວດວິເຄາະທັງໝົດ **ແມ່ນບໍ່ພົບເຊື້ອ ໝາຍຄວາມວ່າ ວັນທີ 30 ມິຖຸນາ 2021 ບໍ່ພົບຜູ້ຕິດເຊື້ອໃໝ່**;

- ສັງລວມການກວດວິເຄາະ ນັບແຕ່ ເດືອນມັງກອນ 2020 ຮອດ ປະຈຸບັນ ໄດ້ເກັບຕົວຢ່າງມາກວດທັງໝົດ **133,094** ຕົວຢ່າງ, ກວດພົບເຊື້ອສະສົມ **49** ຄົນ

3. **ການຕິດຕາມປິ່ນປົວຄົນເຈັບຢູ່ໂຮງໝໍ**

- ມາຮອດປະຈຸບັນ ຜູ້ຕິດເຊື້ອພະຍາດ COVID-19 ຍັງນອນຕິດຕາມປິ່ນປົວຢູ່ໂຮງໝໍ ຈຳນວນ 04 ຄົນ, ທຸກຄົນ ແມ່ນມີສຸຂະພາບຮ່າງກາຍ ຈິດໃຈສົມບູນ ແລະ ແຂງແຮງດີ;

  - 3 ຄົນ ຕິດຕາມປິ່ນປົວ ຢູ່ທີ່ນະຄອນຫຼວງວຽງຈັນ

- ແລະ ອີກ 1 ຕິດຕາມປິ່ນປົວ ຢູ່ທີ່ແຂວງສະຫວັນນະເຂດ

**4. ການສັກຢາກັນພະຍາດໂຄວິດ-19**

- ໃນວັນທີ 2 ເມສາ 2021 ທີ່ຈະມາເຖິງນີ້, ພວກເຮົາຈະໄດ້ສ້າງຂະບວນການສັກຢາກັນພະຍາດໂຄວິດ-19 ທີ່ໄດ້ຮັບການຊ່ວຍເຫຼືອຈາກອິນເດຍ AstraZeneca ຢູ່ໂຮງໝໍມິດຕະພາບ, ບັນດາໂຮງໝໍເມືອງ ລວມທັງ ໂຮງໝໍ ປກສ ແລະ ປກຊ ຢູ່ນະຄອນຫຼວງວຽງຈັນ ເຊິ່ງຈະມີການລົງທະບຽນການສັກວັກຊີນ ຜ່ານແອບພລິເຄຊັ່ນ ໂດຍຖືບັດປະຈຳຕົວ ຫຼື ສຳມະໂນຄົວຂອງທ່ານໄປນຳ. ບັນດາທ່ານ ສາມາດຕິດຕາມຂໍ້ມູນເພີ່ມເຕີມ ໄດ້ທີ່ ເຟດບຸກຂອງສູນຂ່າວສານການແພດ ແລະ ສຸຂະສຶກສາ;

**III. ຂໍ້ແນະນຳ**

**ບັນດາທ່ານທີ່ນັບຖື ແລະ ຮັກແພງທັງຫຼາຍ,**

- ຫຼາຍປະເທດ ຍັງນຳໃຊ້ມາດຕະການລ໋ອກດາວ ໃນການຄວບຄຸມສະພາບການລະບາດ, ບາງປະເທດ ກໍ່ຍັງສືບຕໍ່ຈຳກັດບໍລິເວນ ຜູ້ທີ່ເດີນທາງເຂົ້າມາ ເນື່ອງຈາກຈຳນວນ ຜູ້ຕິດເຊື້ອ ແລະ ເສຍຊີວິດ ຍັງມີທ່າອ່ຽງເພີ່ມຂຶ້ນ;
- ປະຈຸບັນ ຢ່າງໜ້ອຍ 40 ປະເທດ ໃນທົ່ວໂລກ ກຳລັງພະເຊີນກັບການລະບາດຮອບໃໝ່ໃນປະເທດຂອງຕົນ ເຊິ່ງການລະບາດໃນຮອບນີ້ ມີຄວາມກ່ຽວຂ້ອງກັບ ໂຄວິດ-19 ສາຍພັນໃໝ່ກາຍພັນ ເຊິ່ງສາຍພັນດັ່ງກ່າວ ມີຈຸດພິເສດຄື ສາມາດຕິດຕໍ່ຈາກຄົນສູ່ຄົນໄດ້ງ່າຍ ແລະ ໄວກວ່າເກົ່າ;

- ສະເພາະ ປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວເຮົາ ຍັງສືບຕໍ່ມີການລະບາດພາຍໃນປະເທດ ກໍ່ຄື ການລະບາດໃນຊຸມຊົນ. ພວກເຮົາບໍ່ຄວນປະໝາດ ຕ້ອງໄດ້ຮ່ວມແຮງໃຈກັນ ເຝົ້າລະວັງ ຜູ້ທີ່ເດີນທາງເຂົ້າມາ ສປປ ລາວ ແລະ ຜູ້ທີ່ກັບຄືນປະເທດ, ຮັບປະກັນໃຫ້ມີການຈຳກັດບໍລິເວນ ຄົບກຳນົດ 14 ວັນ ເພື່ອຫຼຸດຜ່ອນຄວາມສ່ຽງທີ່ຈະເກີດມີການລະບາດຮອບໃໝ່ໃນບ້ານເຮົາ;
- ອີກເທື່ອໜຶ່ງ ຂໍຮຽກຮ້ອງ ມາຍັງອົງການປົກຄອງທ້ອງຖິ່ນ, ພໍ່ແມ່ປະຊາຊົນ ຈົ່ງເປັນຫູເປັນຕາຊ່ວຍກັນຕິດຕາມ ຖ້າຫາກມີຜູ້ທີ່ລັກລອບເຂົ້າເມືອງ ແບບບໍ່ຖືກລະບຽບ ໃຫ້ລາຍງານຕໍ່ເຈົ້າໜ້າທີ່ທັນທີ ເພື່ອເຮັດການເກັບຕົວຢ່າງ ກວດຊອກຫາເຊື້ອ ແລະ ນຳຜູ້ກ່ຽວໄປຈຳກັດບໍລິເວນໃຫ້ຄົບກຳນົດ 14ວັນ;
- ຕໍ່ກັບສະພາບການດັ່ງກ່າວ, ຈຶ່ງຂໍຄວາມຮ່ວມມືນຳບັນດາທ່ານ ໃນການຈັດຕັ້ງປະຕິບັດມາດຕະການ ທີ່ຄະນະສະເພາະກິດວາງອອກຢ່າງເຄັ່ງຄັດ ແລະ ເຂັ້ມງວດ ເປັນຕົ້ນ ແມ່ນມາດຕະການປ້ອງກັນການຕິດເຊື້ອໃນສັງຄົມ: ການໃສ່ຜ້າອັດ ປາກ-ດັງ ເມື່ອອອກຈາກບ້ານ, ລ້າງມືເລື້ອຍໆ ດ້ວຍນ້ຳສະອາດໃສ່ສະບູ ຫຼື ເຈວລ້າງມື ຫຼື ເຫຼົ້າ70, ຮັກສາໄລຍະຫ່າງໃນສັງຄົມ ຢ່າງໜ້ອຍໄລຍະ 1 ແມັດຂຶ້ນໄປ, ຖ້າບໍ່ຈຳເປັນ ແມ່ນຫຼີກລ້ຽງການໄປຢູ່ໃນສະຖານທີ່ມີຄົນແອອັດຫຼາຍ;

**ຜ່ານໄປນັ້ນ ແມ່ນການລາຍງານສະພາບພະຍາດ ໂຄວິດ-19 ແລະ ການເຝົ້າລະວັງພະຍາດດັ່ງກ່າວ ໃນ ສປປ ລາວ**

**ຕໍ່ໄປ ຂ້າພະເຈົ້າຂໍລາຍງານກ່ຽວກັບ ສະພາບຂອງພະຍາດໄຂ້ຍຸງລາຍຢູ່ໃນ ສປປ ລາວ;**

- ໃນວັນທີ 30 ມີນາ 2021 ສປປ ລາວ ເຮົາ ແມ່ນ ມີລາຍງານຜູ້ຕິດເຊື້ອໄຂ້ຍຸງລາຍ **00 ກໍລະນີ** ແລະ ບໍ່ມີຜູ້ເສຍຊີວິດ (ມີລາຍງານຈາກ ນະຄອນຫຼວງວຽງຈັນ ແລະ 11 ແຂວງ)
- ຕົວເລກໄຂ້ຍຸງລາຍນັບແຕ່ວັນທີ **26/12/2020 ເປັນຕົ້ນມາ ຮອດວັນທີ 30/03/2021** ມີຜູ້ຕິດເຊື້ອກໍລະນີສະສົມທັງໝົດ **173** ຄົນ (ອັນດັບໜຶ່ງ ແມ່ນ ນະຄອນຫຼວງ, ຖັດລົງມາແມ່ນ ອັດຕະປື ແລະ ຫຼວງພະບາງ) ແລະ ຍັງບໍ່ມີຜູ້ເສຍຊີວິດ;
- ສໍາລັບການປ້ອງກັນພະຍາດ ໄຂ້ຍຸງລາຍກໍເຊັ່ນດຽວກັນ ຂໍການຮ່ວມມືມາຍັງ ພໍ່ແມ່ ປະຊາຊົນຂອງພວກເຮົາ ແລະ ການຈັດຕັ້ງ ທຸກພາກສ່ວນໃນສັງຄົມຈົ່ງໄດ້ເອົາໃຈໃສ່ ວຽກງານການສ້າງຂະບວນການ ແລະ ເຮັດສຸຂະສຶກສາໃຫ້ ຄວາມຮູ້ ແລະ ຂໍ້ມູນຂ່າວສານ ກ່ຽວກັບການ ການຈໍາກັດ ແລະ ຄວບຄຸມໜອນນໍ້າຍຸງລາຍ ທີ່ເປັນພາຫະນໍາເຊື້ອພະຍາດ ໄຂ້ຍຸງລາຍ ແລະ ເຮັດຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ, ຖ້າພວກເຮົາ ສາມາດຄວບຄຸມ ໜອນນໍ້າຍຸງລາຍໄດ້ດີ ປະຊາຊົນບັນດາເຜົ່າກໍ່ຈະບໍ່ມີຄວາມສ່ຽງຕໍ່ການຕິດເຊື້ອໃໝ່ ແລະ ເສຍຊີວິດ ຍ້ອນພະຍາດໄຂ້ຍຸງລາຍໃນປີ 2021;
- ກ່ອນຈະຈົບການລາຍງານຂ່າວໃນມື້ນີ້ ຂໍແຈ້ງໃຫ້ບັນດາທ່ານຊາບວ່າ ທ່ານສາມາດ ຕິດຕາມຂໍ້ມູນຂ່າວສານທີ່ເປັນທາງການໄດ້
  - ຈາກເວັບໄຊ້ຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂ ການລະບາດ ພະຍາດໂຄວິດ-19

- ເຟດບຸກຂອງສູນຂ່າວສານການແພດ ແລະ ສຸຂະສຶກສາ, ກະຊວງສາທາລະນະສຸກ
- ແລະ ສາມາດໂທສອບຖາມ ສາຍດ່ວນ 165 ແລະ 166

**ມາຮອດນີ້ການລາຍງານສະພາບພະຍາດ ໂຄວິດ-19 ແລະ ພະຍາດໄຂ້ຍຸງລາຍປະຈຳວັນ ວັນພຸດ ທີ 31 ມີນາ ປີ 2021 ຂອງຂ້າພະເຈົ້າ ໄດ້ສິ້ນສຸດພຽງເທົ່ານີ້. ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານທີ່ຕິດຕາມຊົມ ແລະ ຮັບຟັງ (ຂອບໃຈ)**